ສວພ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

ເລກທີ: 0460/ກລປ

ນະຄອນຫຼວງວຽງຈັນ, ວັນທີ 25 FEB 2019

# ແຈ້ງການ

## ຂອງຫົວໜ້າກົມລ້ຽງສັດ ແລະ ການປະມົງ
## ກ່ຽວກັບການສະກັດກັ້ນ ຫ້າມນຳເຂົ້າ ໝູ ແລະ ຜະລິດຕະພັນໝູທຸກຊະນິດ ລວມທັງຜະລິດຕະພັນປຸງແຕ່ງ ເບື້ອງຕົ້ນ ຈາກ ສປ ຈີນ ແລະ ສສ ຫວຽດນາມ ເຂົ້າສູ່ ສປປ ລາວ

ເຖິງ: ທ່ານ ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບປັບປຸງ ສະບັບເລກທີ 08/ສພຊ, ລົງວັນທີ 11/11/2016.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ ເລກທີ 3824/ກປ, ລົງວັນທີ 18 ສິງຫາ 2017.
- ອີງຕາມ ການລາຍງານຂອງອົງການສຸຂະພາບສັດສາກົນ ກ່ຽວກັບສະພາບການລະບາດ ຂອງພະຍາດອະຫິວາໝູອັບຟຣິກາ ທີ່ກຳລັງມີການລະບາດ ຢູ່ປະເທດ ສປ ຈີນ ແລະ ສສ ຫວຽດນາມ.

ພະຍາດອະຫິວາໝູອັບຟຣິກາ ແມ່ນພະຍາດລະບາດແຜ່ລາມໄວ ຢ່າງຮ້າຍແຮງສຳລັບໝູທຸກຊະນິດ ທຸກເພດ ແລະ ທຸກອາຍຸ, ມີຕົ້ນກຳເນີດ ແລະ ແຜ່ລະບາດ ຢູ່ທົ່ວໄປໃນທະວີບອັບຟຣິກາ ເລີ້ມແຕ່ປີ 1909 ເປັນຕົ້ນມາ, ໄດ້ມີລາຍງານການລະບາດ ຢູ່ຫຼາຍປະເທດ ໃນເອີຣົບ ແລະ ອາຊີ. ພະຍາດດັ່ງກ່າວເກີດຈາກເຊື້ອໄວຣັສ ນອນຢູ່ໃນຕະກຸນ Asfarviridae ມີຄວາມທົນທານສູງຕໍ່ສະພາບແວດລ້ອມ, ມີຊີວິດຢູ່ໄດ້ ໃນຂອບເຂດ ph: 3,9-11,5, ໃນຊາກສັດແຊ່ແຂງເຊື້ອໄວຣັດມີຊີວິດຢູ່ໄດ້ເຖິງ 15 ປີ ແລະ ຖືເຊື້ອໃນໝູ ເຖິງ 4 ປີ. ສາມາດຕິດຕໍ່ໂດຍກົງຈາກການສຳພັດກັບສັດເຈັບ, ໝູຖືເຊື້ອພະຍາດ, ປົນເປື້ອນເຊື້ອໄວຣັດໃນຄົນ, ອຸປະກອນ, ພາຫະນະ ແລະ ອາຫານສັດ. ເສັ້ນທາງຂອງເຊື້ອໄວຣັສເຂົ້າສູ່ຮ່າງກາຍຂອງສັດ ດ້ວຍການກັດຂອງໂຕເຫັບ ເຂົ້າທາງກ້າມຊີ້ນ, ເສັ້ນເລືອດ, ທາງດັງ ແລະ ທາງປາກ. ໄລຍະຟັກເຊື້ອຂອງພະຍາດ 48-72 ຊົ່ວໂມງ ມີອາການສະແດງອອກ ແລະ ຕາຍຢ່າງກະທັນຫັນ ຫາຊໍ້າເຮື້ອ ,ໄຂ້ສູງເຖິງ 42 ອົງສາເຊ, ໃບຫູ, ຜິວໜັງ ເປັນປ່ານສີແດງຊໍ້າ ມີຈຸດເນື້ອຕາຍຕາມແຜ່ນຜິວໜັງພື້ນທ້ອງນ້ອຍ. ອັດຕາການຕາຍສູງ ເຖິງ 90%, ບໍ່ມີຢາປິ່ນປົວ ແລະ ບໍ່ມີຢາວັກຊີນປ້ອງກັນ. ພະຍາດນີ້ສາມາດແຜ່ລະບາດໄປຢ່າງກ້ວາງຂວາງ ໂດຍມີສາເຫດທີ່ສຳຄັນມາຈາກການເຄື່ອນຍ້າຍສັດເຈັບ, ສັດທີ່ເປັນພາຫະນຳເຊື້ອ ແລະ ຜະລິດຕະພັນສັດທີ່ ເຈັບ ຫຼື ຕາຍ.

ໃນປະຈຸບັນ ພະຍາດນີ້ໄດ້ມີການລະບາດຢູ່ໃນ ສປ ຈີນ ແລະ ສສ ຫວຽດນາມ ເຮັດໃຫ້ມີສັດເຈັບ ແລະ ຕາຍ, ພ້ອມທັງໄດ້ຂ້າທຳລາຍສັດທີ່ມີຄວາມສ່ຽງເປັນຈຳນວນຫຼວງຫຼາຍ ເພື່ອຄວບຄຸມການລະບາດຂອງພະຍາດນີ້ ຊຶ່ງໝາຍເຖິງຄວາມສູນເສຍທາງດ້ານເສດຖະກິດຢ່າງມະຫາສານ.

ເພື່ອປ້ອງກັນ ແລະ ສະກັດກັ້ນ ບໍ່ໃຫ້ພະຍາດແຜ່ລະບາດ ເຂົ້າສູ່ ສປປ ລາວ, ຫຼືກລ້ຽງ ຜົນກະທົບ ທີ່ອາດເກີດຂຶ້ນ ໃນການຜະລິດໝູ ແລະ ການສະໜອງຊີ້ນໝູ ເພື່ອບໍລິໂພກຢູ່ພາຍໃນແມ່ນມີຄວາມຈຳເປັນທີ່ສຸດຕ້ອງໄດ້ເອົາໃຈໃສ່ ຕິດຕາມກວດກາ ແລະ ສະກັດກັ້ນ ການນຳເຂົ້າໝູ ແລະ ຜະລິດຕະພັນໝູທຸກຊະນິດ ລວມທັງຜະລິດຕະພັນປຸງແຕ່ງເບື້ອງຕົ້ນຈາກປະເທດໃກ້ຄຽງຢ່າງເຂັ້ມງວດ. ຖ້າວ່າພວກເຮົາຫາກບໍ່ພ້ອມກັນປະຕິບັດມາດຕະການເຂັ້ມງວດອາດເຮັດໃຫ້ ສປປ ລາວ ມີຜົນກະທົບຢ່າງໜັກໜ່ວງກ້າວໄປເຖິງບໍ່ສາມາດລ້ຽງໝູ ແລະ ບໍ່ມີຊີ້ນໝູບໍລິໂພກໃນອານາຄົດເປັນໄລຍະຍາວ.

## ກົມລ້ຽງສັດ ແລະ ການປະມົງ ອອກແຈ້ງການ ດັ່ງນີ້:

1) ໃຫ້ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງ ໂດຍສະເພາະ ແຂວງທີ່ມີຊາຍແດນຕິດກັບ ສປ ຈີນ ແລະ ສສ ຫວຽດນາມ ໃຫ້ຊີ້ນຳພະນັກງານວິຊາການດ່ານກວດກາສັດຕະວະແພດປະຈຳດ່ານຊາຍແດນທີ່ຂຶ້ນກັບຕົນ ທັງໃນດ່ານສາກົນ ແລະ ດ່ານທ້ອງຖິ່ນ ຢຸດ ຫຼື ໂຈະຊົ່ວຄາວ ບໍ່ໃຫ້ອະນຸຍາດ ນຳເຂົ້າ ໝູ ແລະ ຜະລິດຕະພັນໝູ ທຸກຊະນິດ ລວມທັງຜະລິດຕະພັນປຸງແຕ່ງເບື້ອງຕົ້ນຈາກ ສປ ຈີນ ແລະ ສສ ຫວຽດນາມ ເຂົ້າມາລ້ຽງ ຫຼື ບໍລິໂພກ ພາຍໃນແຂວງ ແລະ ນະຄອນຫລວງ ຢ່າງເຂັ້ມງວດ.

2) ໃຫ້ຕິດຕາມ ກວດກາ ແລະ ບໍ່ອະນຸຍາດໃຫ້ນຳເຂົ້າໝູ ແລະ ຜະລິດຕະພັນໝູທຸກຊະນິດ ລວມທັງຜະລິດຕະພັນປຸງແຕ່ງເບື້ອງຕົ້ນ ເພື່ອມາຈຳໜ່າຍ ຫຼື ຕິດຕາມຕົວ ຜູ້ໂດຍສານ ຫຼື ຜູ້ເດີນທາງ ເຂົ້າມາ ໃນ ສປປ ລາວ ເພື່ອບໍລິໂພກສ່ວນຕົວ ຫຼື ໃນຄອບຄົວ ເຊັ່ນດຽວກັນ ຢ່າງເດັດຂາດ.

3) ໃນກໍລະນີ ທີ່ເຈົ້າໜ້າທີ່ສັດຕະວະແພດ ຫາກກວດພົບເຫັນ ຜູ້ລະເມີດ ຝ່າຝືນ ນຳເຂົ້າ ຫຼື ລັກລອບນຳເຂົ້າ ໝູ ແລະ ຜະລິດຕະພັນໝູ ທີ່ບໍ່ຖືກຕ້ອງ ໃຫ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ປະຕິບັດມາດຕະການຕາມ ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ. ສຳລັບ ໝູ ແລະ ຜະລິດຕະພັນໝູທຸກຊະນິດ ລວມທັງຜະລິດຕະພັນປຸງແຕ່ງເບື້ອງຕົ້ນ ໃຫ້ກວດຍຶດ ແລ້ວນຳໄປທຳລາຍຖິ້ມ ດ້ວຍການເຜົາ ຫຼື ຝັງ ສ່ວນຜູ້ທີ່ລະເມີດ ໃຫ້ກ່າວເຕືອນ, ຖ້າຫາກພົບເຫັນເປັນຄັ້ງທີສອງຈະຖືກປັບໃໝເພີ່ມຂຶ້ນ ຫຼື ຖືກດຳເນີນຄະດີທາງອາຍາ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

4) ສ່ວນເຈົ້າໜ້າທີ່ທີ່ປ່ອຍປະລະເລີຍ ຫຼື ອຳນວຍຄວາມສະດວກໃນການນຳເຂົ້າໝູ ແລະ ຜະລິດຕະພັນໝູທຸກຊະນິດ ລວມທັງຜະລິດຕະພັນປຸງແຕ່ງເບື້ອງຕົ້ນທີ່ໄດ້ກ່າວມາຂ້າງເທິງນີ້, ຖ້າກວດພົບເຫັນຕ້ອງໄດ້ປະຕິບັດວິໄນ ແລະ ດຳເນີນຄະດີຕາມລະບຽບກົດໝາຍຢ່າງແຂ້ມງວດ.

5) ໃຫ້ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ກຸ່ມຜະລິດ, ສະມາຄົມລ້ຽງສັດ ຫຼື ລ້ຽງໝູປະຈຳທ້ອງຖິ່ນ ສ້າງແຜນດຸ່ນດ່ຽງຄວາມຕ້ອງການໃນການຜະລິດໝູພາຍໃນ ຢ່າງຮອບດ້ານ ເພື່ອຫຼຸດຜ່ອນການນຳເຂົ້າ ຈາກຕ່າງປະເທດ ຖ້າແຂວງໃດ ເຫັນວ່າ ການສະໜອງໝູ ຍັງບໍ່ພຽງພໍກັບຄວາມຕ້ອງການການບໍລິໂພກພາຍໃນແຂວງຂອງຕົນ ໃຫ້ພົວພັນ ນຳກົມລ້ຽງສັດ ແລະ ການປະມົງ ຫຼື ຂະແໜງລ້ຽງສັດ ແລະ ການປະມົງນະຄອນຫຼວງ ຫຼື ແຂວງອື່ນ ທີ່ຜະລິດໝູເກີນຄວາມຕ້ອງການ ຈະເປັນຜູ້ອຳນວຍຄວາມສະດວກໃນການຈັດຫາໝູ ເພື່ອຕອບສະໜອງໃຫ້.

6) ກົມລ້ຽງສັດ ແລະ ການປະມົງ ຈະເປັນຜູ້ຄົ້ນຄວ້າ ພິຈາລະນາ ແລະ ອອກແຈ້ງການສະເພາະ ເປັນແຕ່ລະໄລຍະ ທີ່ເຫັນວ່າ ມີຄວາມຈຳເປັນ ຕ້ອງໄດ້ປະກາດຍົກເລີກ ການໂຈະ ການນຳເຂົ້າ ໝູ ແລະ ຜະລິດຕະພັນໝູທຸກຊະນິດ ລວມທັງ ຜະລິດຕະພັນປຸງແຕ່ງເບື້ອງຕົ້ນ.

7) ເມື່ອໄດ້ຮັບແຈ້ງການສະບັບນີ້ແລ້ວ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງ ຮີບຮ້ອນປະສານ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ, ໜ່ວຍງານດ່ານກວດກາສັດຕະວະແພດຊາຍແດນທີ່ຂຶ້ນກັບຕົນ ທັງດ່ານສາກົນ ແລະ ດ່ານທ້ອງຖິ່ນ ພ້ອມທັງ ປະສານໄປຍັງພາກສ່ວນທີ່ກ່ຽວຂ້ອງປະຈຳຢູ່ດ່ານ, ອົງການປົກຄອງທ້ອງຖິ່ນ ແລະ ຜູ້ປະກອບການ ລວມທັງ ຜູ້ໂດຍສານ ຫຼື ຜູ້ເດີນທາງ ເຂົ້າສູ່ ສປປ ລາວ ຮັບຊາບ ແລະ ປະຕິບັດຕາມແຈ້ງການ ສະບັບນີ້ ຢ່າງ ເຂັ້ມງວດ ທົ່ວເຖິງ.

ຮກ ຫົວໜ້າກົມລ້ຽງສັດ ແລະ ການປະມົງ

ກົມລ້ຽງສັດ ແລະ ການປະມົງ

ດຣ. ສີແສງ ຊຸນສີ

<u>ບ່ອນນຳສົ່ງ:</u>

| | | |
|---|---|---|
| 1. | ລັດຖະມົນຕີວ່າການກະຊວງກປ (ເພື່ອໃຊ້ຕາງລາຍງານ) | 1 ສະບັບ |
| 1. | ຫ້ອງການກະຊວງກປ (ເພື່ອໃຊ້ຕາງລາຍງານ) | 1 ສະບັບ |
| 2. | ພະແນກກະສິກຳ ແລະ ປ່າໄມ້ (ເພື່ອຊ່ວຍຊີ້ນຳການຈັດຕັ້ງປະຕິບັດ) | 1 ສະບັບ |
| 3. | ກົມ, ກອງ, ສູນ, ສະຖາບັນອອ້ມຂ້າງກະຊວງກປ (ເພື່ອຊາບ) | 1 ສະບັບ |
| 4. | ພະແນກ, ສູນ ອ້ອມຂ້າງກົມ (ເພື່ອປະຕິບັດ) | 1 ສະບັບ |
| 5. | ເກັບມ້ຽນ | 1 ສະບັບ |